Washington State Department of Social & Health Services
ADSA Aging & Disability Services Administration

# ຄຳຮ້ອງຂໍເອົາການບໍລິການສຳລັບປະຊາຊົນຄົນອາວຸໂສ
## Senior Citizens Services Application

ພວກເຮົາພູມໃຈທີ່ທ່ານປະສົງທີ່ຈະເຂົ້າຮ່ວມໃນໂຄງການບໍລິການສຳລັບປະຊາຊົນຄົນອາວຸໂສ ແລະ ຫວັງວ່າພວກເຮົາຈະສາມາດຮັບໃຊ້ທ່ານໄດ້.

ພວກເຮົາຕ້ອງການສິ່ງຕໍ່ລົງໄປນີ້ເພື່ອຈະພິຈາຣະນາເບິ່ງວ່າທ່ານມີເງື່ອນໄຂໄດ້ຮັບການບໍລິການຟຣີ ຫລື ການບໍລິການໃນຣາຄາລູດຜ່ອນ ຫລື ບໍ່. ທ່ານມີເງື່ອນໄຂທີ່ຈະຂໍເອົາ:

1. ຖ້າຫາກວ່າທ່ານມີອາຍຸ 60 ປີ ແລະ ວ່າງງານຢູ່ ຫລື ເຮັດວຽກບໍ່ກາຍເກີນ 20 ຊົ່ວໂມງຕໍ່ອາທິດນຶ່ງ.
2. ຖ້າຫາກວ່າທ່ານມີອາຍຸ 65 ປີ ຫລື ແກ່ກວ່າ.

**ຂັ້ນທີ 1**

| ນາມສະກຸນ | ຊື່ | ຊື່ກາງ | ອາຍຸ | ເພດພັນ<br>☐ ຊາຍ ☐ ຍິງ<br>☐ ອື່ນໆ | ວັນເກີດ (ດດ/ວວ/ປປປປ) |
|---|---|---|---|---|---|
| | | | | | |

| ທີ່ຢູ່ໄປສະນີ (ຖນົນ, ຫ້ອງ) | ເມືອງ | ຣັດ | ຊິບໂຄດ | ໂທຣະສັບ (ຣະຫັດເຂດ) |
|---|---|---|---|---|
| | | | | |

ຜິວພັນ/ຊົນເຜົ່າ: ຕາມສະມັກໃຈ (ກະຣຸນາຫມາຍໃສ່ອັນນຶ່ງ)

☐ ຄົນຜິວຂາວ ☐ ຄົນຜິວດຳ/ຄົນອະເມຣິກາດຳ ☐ ຄົນອະເມຣິກັນອິນດຽນ/ອາລາສກາດັ້ງເດີມ
☐ ຄົນຮິສແປນິກ/ລາຕິໂນ ☐ ຄົນລາຕິໂນ/ບໍ່ແມ່ນຮິສແປນິກ ☐ ຄົນເອເຊັຽ
☐ ຄົນຮາວາອຽນດັ້ງເດີມ ຫລື ຄົນເກາະປາຊີຟິກອື່ນໆ ☐ ຄົນສອງຜິວ ຫລື ຫລາຍກວ່ານັ້ນ:

ຖ້າວ່າອາຍຸ 60 ປີ, ແຕ່ວ່າບໍ່ຮອດ 65 ປີເທື່ອ, ກະຣຸນາຕອບຄຳຖາມຕໍ່ລົງໄປນີ້

☐ ບໍ່ໄດ້ເຮັດວຽກ ☐ ເຮັດວຽກຢູ່: ☐ 20 ຊົ່ວໂມງຕໍ່ອາທິດນຶ່ງ ຫລື ຕ່ຳກວ່າ ☐ ຫລາຍກວ່າ 20 ຊົ່ວໂມງຕໍ່ອາທິດນຶ່ງ

**ຂັ້ນທີ 2**

ຈຳນວນຂອງບຸກຄົນຢູ່ໃນຄອບຄົວ ແລະ ຊັບສິນຂອງຄອບຄົວ (ຢ່າສູ່ລວມເອົາເຮືອນບ່ອນຢູ່ອາສັຍ, ຣົດຍົນ, ຫລື ມູນຄ່າແລກປ່ຽນເອົາເງິນສົດຂອງປະກັນພັຍຊີວິດ)

| ຫມາຍໃສ່ອັນນຶ່ງ | | ແມ່ນ | ບໍ່ແມ່ນ |
|---|---|---|---|
| ☐ ນຶ່ງ (1) ຄົນ | $10,000 | ☐ | ☐ |
| ☐ ສອງ (2) ຄົນ | $15,000 | ☐ | ☐ |
| ☐ ສາມ (3) ຄົນ | $16,000 | ☐ | ☐ |
| ☐ ສີ່ (4) ຄົນ | $17,000 | ☐ | ☐ |
| ☐ ຫ້າ (5) ຄົນ | $18,000 | ☐ | ☐ |

ຣາຍໄດ້ປະຈຳເດືອນທັງຫມົດແມ່ນ: $___________________

ຖ້າຫາກວ່າຣາຍໄດ້ຂອງຄອບຄົວຂອງທ່ານເທົ່າກັບຫລືຕ່ຳກວ່າ 40% ຂອງຣາຍໄດ້ປານກາງຂອງຣັດ,ແລະທ່ານຫມາຍໃສ່ວ່າ "ແມ່ນ" ຢູ່ໃນຊັບສິນສຳລັບຂະນາດຂອງຄອບຄົວຂອງທ່ານ,ທ່ານອາດຈະມີເງື່ອນໄຂໄດ້ຮັບການບໍລິການໃນຣາຄາຕ່ຳກວ່າຄ່າ.

ຕ້ອງຖືກຂຽນປະກອບໂດຍຜູ້ປຶກສາ/ພໍ່ຄ້າ

ທ່ານຈະຖືກກຳນົດໃຫ້ຈ່າຍ ____% ຂອງຄ່າຂອງການບໍລິການແຕ່ລະຢ່າງ.

**ຂັ້ນທີ 3**

### ຄຳແຈ້ງການຂອງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ

ຣາຍຣະອຽດທີ່ທ່ານເອົາໃຫ້ໄດ້ຖືກໃຊ້ເພື່ອຈະພິຈາຣະນາເບິ່ງເງື່ອນໄຂຮັບເອົາຂອງທ່ານສຳລັບຜູ້ໃຫ້ການບໍລິການພາຍໃຕ້ກົດບັນຍັດການບໍລິການປະຊົນຄົນອາວຸໂສ (Senior Citizens Services Act). ຣາຍຣະອຽດຍັງຈະຖືກໃຊ້ອີກຄືກັນເພື່ອຈະທ້ອນໂຮມເອົາສະຖິຕິ ແລະ ບໍ່ດັ່ງນັ້ນຊ່ວຍເຫລືອໃນການປົກຄອງໂຄງການ. ຣາຍຣະອຽດສ່ວນຕົວຈະຖືກເຮັດນຳໃນແບບເປັນຄວາມລັບຢ່າງເຂັ່ງຂັດໂດຍສອດຄ່ອງຕາມກົດຫມາຍຂອງຣັດວໍຊິງຕັນ. ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກອາດຈະຕິດຕໍ່ຫາທ່ານໃນພາຍຫລັງເພື່ອຈະກວດເບິ່ງເງື່ອນໄຂຮັບເອົາຂອງທ່ານຄືນ.

### ຄຳແຈ້ງການຄວາມເຂົ້າໃຈຂອງຜູ້ຮ້ອງຂໍ

ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈໃນຂ້າງເທິງນີ້ ແລະ ຂໍແຈ້ງວ່າຣາຍຣະອຽດທີ່ຖືກເອົາໃຫ້ໂດຍຂ້າພະເຈົ້າເປັນຄວາມຈິງ ແລະ ຄົບຖ້ວນອີງຕາມຄຳຮັບຮູ້ທີ່ດີທີ່ສຸດຂອງຂ້າພະເຈົ້າ.

| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ | ເຊັນຊື່ສຳລັບຜູ້ຮ້ອງຂໍ |
|---|---|---|
| | | |

### ຜູ້ປຶກສາ/ພໍ່ຄ້າຂອງຄຳຮ້ອງຂໍ

ຄຳຮ້ອງຂໍໃບນີ້ໄດ້ຖືກກວດເບິ່ງຄືນເພື່ອຄວາມຖືກຕ້ອງແນ່ນອນ.

| ຜູ້ຕາງຫນ້າທີ່ຖືກແຕ່ງຕັ້ງຂອງກົມ DSHS / ພໍ່ຄ້າ | ວັນທີ | ເຊັນຊື່ສຳລັບຜູ້ຮ້ອງຂໍ |
|---|---|---|
| | | |

ເມື່ອເວລາທ່ານຮ້ອງຂໍເອົາໂຄງການບໍລິການສຳລັບປະຊາຊົນຄົນອາວຸໂສ, ທ່ານມີສິດທິບາງຢ່າງຊຶ່ງທ່ານຄວນຈະຖືກນັບຖື. ທ່ານຍັງມີຄວາມຮັບຜິດຊອບບາງຢ່າງອີກຄືກັນຊຶ່ງທ່ານຈະຕ້ອງປະຕິບັດເພື່ອວ່າຈະມີເງື່ອນໄຂໄດ້ຮັບ ແລະ ຈະດຳເນີນທີ່ຈະໄດ້ຮັບການບໍລິການຕໍ່ໄປ.

ສິດທິຂອງທ່ານ - ທ່ານມີສິດທີ່ຈະ:

1. ຮ້ອງຂໍເອົາການຊ່ວຍເຫລືອ ຫລື ການບໍລິການຕ່າງໆທີ່ຖືກເອົາໃຫ້ໂດຍໂຄງການບໍລິການສຳລັບປະຊາຊົນຄົນອາວຸໂສ.
2. ໄດ້ຮັບການເຮັດນຳຢ່າງມີກຽດ ແລະ ຍຸຕິທັມໂດຍບໍ່ມີການແບ່ງແຍກຊົນຊັ້ນວັນນະໃສ່ຍ້ອນຜິວພັນ, ສີສັນ, ລັດທິ, ເພດ, ຄວາມຊອບໃຈທາງເພດ, ສາສະນາ, ຄວາມເຊື່ອຖືທາງການເມືອງ, ຄວາມເສັຽອົງຄະ, ເຊື້ອຊາດດັ້ງເດີມ, ນັກຮົບເກົ່າ ຫລື ສະພາບທະຫານ.
3. ໄດ້ຮັບຄຳຕັດສິນໂດຍທັນທີໂລດໃນຄຳຮ້ອງຂໍຂອງທ່ານ (ພາຍໃນ 10 ວັນ).
4. ຫວັງວ່າຣາຍຣະອຽດອັນທີ່ທ່ານເອົາໃຫ້ຈະບໍ່ຖືກເປີດເຜີຍ ຫລື ຖືກໃຊ້ສຳລັບຈຸດປະສົງແນວໃດແນວນຶ່ງນອກຈາກອັນທີ່ຈຳເປັນສຳລັບການປົກຄອງໂຄງການ.
5. ຮ້ອງຂໍເອົາການຟັງເຣື່ອງບໍ່ເປັນທາງການຈາກຫ້ອງການບໍຣິການຄົນອາວຸໂສປະຈຳທ້ອງຖິ່ນ. ຖ້າຫາກວ່າທ່ານບໍ່ພໍໃຈນຳຜົນອອກມາຂອງການຟັງເຣື່ອງທີ່ບໍ່ເປັນທາງການ,ທ່ານຈະຮ້ອງຂໍໃຫ້ກົມເອົາການຟັງເຣື່ອງຈາກອຳນາດການປົກຄອງໃຫ້ໄດ້ຕາມທີ່ຖືກກ່າວເຈາະຈົງຢູ່ໃນກົດຫມາຍ Chapter 388-02 WAC.

ຄວາມຮັບຜິດຊອບຂອງທ່ານ - ທ່ານມີຄວາມຮັບຜິດຊອບທີ່ຈະ:

ເອົາຣາຍຣະອຽດທີ່ຖືກຕ້ອງ ແລະ ຄົບຖ້ວນໃຫ້ໃສ່ໃນຄຳຮ້ອງຂໍຂອງທ່ານ ແລະ ໃບຟອມອື່ນໆທີ່ກ່ຽວພັນນຳເງື່ອນໄຂຮັບການຊ່ວຍເຫລືອຂອງທ່ານ.

ຮ້ອງຂໍເອົາ ແລະ ໃຊ້ການບໍຣິການຕ່າງໆຈາກບ່ອນຊ່ວຍເຫລືອບ່ອນອື່ນຊຶ່ງທ່ານອາດຈະມີເງື່ອນໄຂໄດ້ຮັບ.

ລາຍງານໄປຫາຜູ້ໃຫ້ການບໍຣິການເຣື່ອງການປ່ຽນແປງຕ່າງໆໃນຊື່ຂອງທ່ານ, ທີ່ຢູ່ ຫລື ໃນສະພາບການຂອງທ່ານຊຶ່ງຈະສະທ້ອນເຖິງເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານ ຫລື ຈຳນວນເງິນຄ່າທຳນຽມທີ່ທ່ານຈ່າຍສຳລັບການບໍຣິການ, ເຊັ່ນວ່າຣາຍໄດ້, ຊັບສິນ ຫລື ຄົນໃນຄອບຄົວ.